ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0076/ອຄ.ກຂອ

ນະຄອນຫລວງວຽງຈັນ, ວັນທີ 13 ມັງກອນ 2012.

# ແຈ້ງການ

## ວ່າດ້ວຍລາຍການສິນຄ້າທີ່ຕ້ອງຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກ ແບບອັດຕະໂນມັດ ແລະ ແບບບໍ່ອັດຕະໂນມັດ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມ ດຳລັດ ຂອງ ລັດຖະບານ ວ່າດ້ວຍການນຳເຂົ້າ ແລະ ສົ່ງອອກ ສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 06 ເມສາ 2011;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 07 ກໍລະກົດ 2009;
- ອີງຕາມການປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ; ແລະ
- ເພື່ອອຳນວຍຄວາມສະດວກດ້ານຂໍ້ມູນທີ່ຕິດພັນກັບການຄ້າໃຫ້ແກ່ ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກສິນຄ້າ,

## ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ດັ່ງນີ້ :

1. ລາຍການສິນຄ້າທີ່ຕ້ອງຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກແບບອັດຕະໂນມັດ ແລະ ແບບບໍ່ອັດຕະໂນມັດ ມີດັ່ງນີ້:
   - ລາຍການສິນຄ້າທີ່ຕ້ອງຂໍອະນຸຍາດນຳເຂົ້າແບບອັດຕະໂນມັດແມ່ນໄດ້ລະບຸໄວ້ໃນເອກະສານຊ້ອນ ທ້າຍ ກ ຂໍ້ I;
   - ລາຍການສິນຄ້າທີ່ຕ້ອງຂໍອະນຸຍາດນຳເຂົ້າແບບບໍ່ອັດຕະໂນມັດແມ່ນໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ ກ ຂໍ້ II;
   - ລາຍການສິນຄ້າທີ່ຕ້ອງຂໍອະນຸຍາດສົ່ງອອກແບບອັດຕະໂນມັດແມ່ນໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ ຂ ຂໍ້ I; ແລະ

- ລາຍການສິນຄ້າທີ່ຕ້ອງຂໍອະນຸຍາດສົ່ງອອກແບບບໍ່ອັດຕະໂນມັດແມ່ນໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ ຂ ຂໍ້ II.

2. ສິນຄ້າທີ່ບໍ່ໄດ້ລະບຸໄວ້ໃນບັນດາເອກະສານຊ້ອນທ້າຍຂອງແຈ້ງການສະບັບນີ້ ແມ່ນໃຫ້ດຳເນີນຕາມຂັ້ນຕອນການແຈ້ງພາສີໄດ້ເລີຍ; ເວັ້ນເສຍແຕ່, ສິນຄ້າທີ່ຖືກຄຸ້ມຄອງໂດຍກົງພາຍໃຕ້ສິນທິສັນຍາ ທີ່ ສປປ ລາວ ເປັນພາຄີ, ສິນຄ້າທີ່ຖືກຄຸ້ມຄອງໂດຍ ມາດຕະການສຸຂານາໄມ ແລະ ສຸຂານາໄມພືດ (SPS) ແລະ ລະບຽບການທາງດ້ານເຕັກນິກ (TBT) ຊຶ່ງຕ້ອງປະຕິບັດຕາມລະບຽບການທີ່ກ່ຽວຂ້ອງກ່ອນການແຈ້ງພາສີ.

3. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນ ແຈ້ງການສະບັບ ເລກທີ 0826/ອຄ.ກຂອ, ລົງວັນທີ 03 ພຶດສະພາ 2011.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ,

ດຣ. ນາມ ວິຍະເກດ

# ເອກະສານຊ້ອນທ້າຍ ກ

# ສິນຄ້າທີ່ຕ້ອງຂໍອະນຸຍາດນຳເຂົ້າແບບອັດຕະໂນມັດ ແລະ ບໍ່ອັດຕະໂນມັດ

## I. ສິນຄ້າທີ່ຕ້ອງຂໍອະນຸຍາດນຳເຂົ້າແບບອັດຕະໂນມັດ

| ລ/ດ | ລະຫັດສິນຄ້າ | ສິນຄ້າ | ເຫດຜົນ | ຂະແໜງການອອກອະນຸຍາດ |
|---|---|---|---|---|
| 1. | 8701.20<br>8701.30.20<br>8701.90<br>87.02<br>87.03<br>87.04<br>87.05<br>87.11 | ພາຫະນະທາງ ບົກທຸກປະເພດທີ່ແລ່ນດ້ວຍເຄື່ອງ ຈັກ, ຍົກເວັ້ນລົດສາມລໍ້ (87.04.31) | ເພື່ອເກັບກຳສະຖິຕິໃນການນຳເຂົ້າ | ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການນຳເຂົ້າ ແລະ ສົ່ງອອກ) |
| 2. | 27.10<br>27.11 | ນ້ຳມັນ (ນ້ຳມັນລົດ) ແລະ ອາຍແກັສ | ເພື່ອເກັບກຳສະຖິຕິໃນການນຳເຂົ້າ | ກະຊວງອຸດສາຫະກຳ ແລະ ການຄ້າ ( ກົມການນຳເຂົ້າ ແລະ ສົ່ງອອກ ) |
| 3. | 4403.20.104<br>407.29<br>0601.20.90 | ໄມ້ທ່ອນ, ຕໍໄມ້, ປູດໄມ້ ແລະ ໄມ້ແປຮູບ | ເພື່ອເກັບກຳສະຖິຕິໃນການນຳເຂົ້າ | ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການນຳເຂົ້າ ແລະ ສົ່ງອອກ) |
| 4. | 1006. | ເຂົ້າກ້ອງ, ປາຍເຂົ້າ, ເຂົ້າທີ່ສີເຄິ່ງ ໜຶ່ງແລ້ວ ຫຼື ສີທັງໝົດ ຈະຂັດ ຫຼື ບໍ່ ກໍຕາມ | ເພື່ອເກັບກຳສະຖິຕິໃນການນຳເຂົ້າ | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ |
| 5. | 72.13<br>72.14<br>72.15<br>72.16 | ເຫຼັກເສັ້ນ ແລະ ເຫຼັກຮູບປະພັນຕ່າງໆ | ເພື່ອເກັບກຳສະຖິຕິໃນການນຳເຂົ້າ | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ |
| 6. | 25.23<br>38.16 | ຊີມັງ, ມໍທາຣ, ຄອນກຣີດ | ເພື່ອເກັບກຳສະຖິຕິໃນການນຳເຂົ້າ | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ |
| 7. | 4901 | ຜະລິດຕະພັນສິ່ງພິມ | ເພື່ອເກັບກຳສະຖິຕິໃນການນຳເຂົ້າ | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (ກົມພິມຈຳໜ່າຍ) |
| 8. | 26.01-26.17 | ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ | ເພື່ອເກັບກຳສະຖິຕິໃນການນຳເຂົ້າ | ກະຊວງພະລັງງານ ແລະ ບໍ່ແຮ່ (ກົມບໍ່ແຮ່) |
| 9. | 84.67.81.00<br>84.67.89.00<br>84.67.91.10 | ເຄື່ອງຈັກຂຸດຄົ້ນໄມ້, ຈັກຕັດໄມ້, ເລື່ອຍໂສ້, ລວມທັງສ່ວນປະກອບ - ອຸປະກອນ | ເພື່ອເກັບກຳສະຖິຕິໃນການນຳເຂົ້າ | ກະຊວງ ກະສິກຳ ແລະ ປ່າໄມ້ (ກົມປ່າໄມ້) |

## II. ສິນຄ້າທີ່ຕ້ອງຂໍອະນຸຍາດນຳເຂົ້າແບບບໍ່ອັດຕະໂນມັດ

| ລ/ດ | ລະຫັດສິນຄ້າ | ສິນຄ້າ | ເຫດຜົນ | ຂະແໜງການອອກອະນຸຍາດ |
|---|---|---|---|---|
| 1. | 93.03.20<br>93.03.30 | ປືນ ແລະ ລູກປືນ ສຳລັບໃຊ້ໃນການຝຶກຊ້ອມ ແລະ ແຂ່ງຂັນກິລາ | ເພື່ອຄວາມປອດໄພຂອງປະຊາຊົນ ແລະ ຄວາມໝັ້ນຄົງຂອງຊາດ | ກະຊວງປ້ອງກັນປະເທດ<br>(ກົມໃຫຍ່ເສນາທິການ) |
| 2. | 36.02<br>36.03 | ວັດຖຸທາດລະເບີດທີ່ໃຊ້ໃນອຸດສາຫະກຳ:<br>- ທາດລະເບີດ<br>- ອຸປະກອນລະເບີດ<br>- ວັດຖຸລະເບີດ<br>- ດອກໄມ້ໄຟ | ເພື່ອຄວາມປອດໄພຂອງປະຊາຊົນ , ຄວາມໝັ້ນຄົງຂອງຊາດ ແລະ ຮັກສາສິ່ງແວດລ້ອມ. | ກະຊວງປ້ອງກັນປະເທດ.<br>(ກົມອຸດສາຫະກຳປ້ອງກັນຊາດ) |
| 3. | 7108.12.10 | ຄຳແທ່ງ (ສະເພາະຄຳແທ່ງທີ່ສາກົນຮັບຮູ້ເພື່ອນຳໃຊ້ໃນການຊຳລະ) | ເພື່ອຄວາມໝັ້ນຄົງທາງດ້ານເສດຖະກິດເງິນຕາ | ທະນາຄານ ແຫ່ງ ສປປ ລາວ<br>(ກົມນະໂຍບາຍເງິນຕາ) |

# ເອກະສານຊ້ອນທ້າຍ ຂ
# ສິນຄ້າທີ່ຕ້ອງຂໍອະນຸຍາດສົ່ງອອກແບບອັດຕະໂນມັດ ແລະ ບໍ່ອັດຕະໂນມັດ

## I. ສິນຄ້າທີ່ຕ້ອງຂໍອະນຸຍາດສົ່ງອອກແບບອັດຕະໂນມັດ

| ລ/ດ | ລະຫັດສິນຄ້າ | ລາຍການສິນຄ້າ | ເຫດຜົນ | ຂະແໜງການອອກອະນຸຍາດ |
|---|---|---|---|---|
| 1. | 4403.20.10<br>4407.29<br>4409.29.00<br>0601.20.90 | ໄມ້ທ່ອນ, ຕໍໄມ້, ປູດໄມ້, ໄມ້ແປຮູບ ແລະ ໄມ້ເຄິ່ງສໍາເລັດຮູບ ຈາກສວນໄມ້ປູກ | ເພື່ອຕິດຕາມກວດກາຄວາມສອດຄ່ອງຂອງການລິເລີ່ມນໍາໃຊ້ລະບົບການຄຸ້ມຄອງໄມ້ແບບຕ່ອງໂສ້ (CoC) | ກະຊວງອຸດສາຫະກໍາ ແລະ ການຄ້າ (ກົມການນໍາເຂົ້າ ແລະ ສົ່ງອອກ) |
| 2. | 1006. | ເຂົ້າເປືອກ, ເຂົ້າກ້ອງ, ປາຍເຂົ້າ, ເຂົ້າທີ່ສີເຄິ່ງໜຶ່ງແລ້ວ ຫຼື ສີທັງໝົດ ຈະຂັດ ຫລື ບໍ່ກໍ່ຕາມ | ເພື່ອເກັບກໍາສະຖິຕິການສົ່ງອອກ | ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫລວງ |
| 3. | 2601-2617 | ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ | ເພື່ອປົກປັກຮັກສາຊັບພະຍາກອນທໍາມະຊາດ | ກະຊວງພະລັງງານ ແລະ ບໍ່ແຮ່ (ກົມບໍ່ແຮ່) |

## II. ສິນຄ້າທີ່ຕ້ອງຂໍອະນຸຍາດສົ່ງອອກແບບບໍ່ອັດຕະໂນມັດ

| ລ/ດ | ລະຫັດສິນຄ້າ | ລາຍການສິນຄ້າ | ເຫດຜົນ | ຂະແໜງການຮັບຜິດຊອບ |
|---|---|---|---|---|
| 1. | 4403.20.10<br>4407.29<br>4409.29.00<br>0601.20.90 | ໄມ້ທ່ອນ, ຕໍໄມ້, ຕູດໄມ້, ໄມ້ແປຮູບ ແລະ ໄມ້ເຄິ່ງສໍາເລັດຮູບ ຈາກປ່າທໍາມະຊາດ | ເພື່ອຕິດຕາມກວດກາຄວາມສອດຄ່ອງຂອງການລິເລີ່ມນໍາໃຊ້ລະບົບການຄຸ້ມຄອງໄມ້ແບບຕ່ອງໂສ້ (CoC) | ກະຊວງອຸດສາຫະກໍາ ແລະ ການຄ້າ (ກົມການນໍາເຂົ້າ ແລະ ສົ່ງອອກ) |
| 2. | 7108.12.10 | ຄໍາແທ່ງ ( ສະເພາະຄໍາແທ່ງທີ່ສາກົນຮັບຮູ້ ເພື່ອນໍາໃຊ້ການຊໍາລະ ) | ເພື່ອຄວາມໝັ້ນຄົງທາງດ້ານເສດຖະກິດເງິນຕາ | ທະນາຄານ ແຫ່ງ ສປປ ລາວ (ກົມນະໂຍບາຍເງິນຕາ) |